

ຊື່ຜູ້ລົງສະໝັກເລືອກຕັ້ງ: Alexis Mercedes Rinck

ຊື່ການໂຄສະນາຫາສຽງ: Alexis ສໍາລັບ Seattle

ເວັບໄຊການໂຄສະນາຫາສຽງ: alexisforseattle.com

**ຕໍາແໜ່ງໃນເມືອງ:** 8

ເບີໂທລະສັບການໂຄສະນາຫາສຽງ: 206-705-9305

ດ້ວຍປະສົບການໃນການສະໜັບສະໜຸນການບໍລິການມະນຸດ ແລະ ນະໂຍບາຍສາທາລະນະສຸກ, ຊີ້ນໍາແຜນຕອບໂຕ້ການຂາດທີ່ຢູ່ອາໄສສຸກເສີນ ແລະ ກໍານົດນະໂຍບາຍການເງິນ ແລະ ການງົບປະມານຢູ່ມະຫາວິທະຍາໄລ University of Washington, ຂ້າພະເຈົ້າຈະນໍາເອົາຄວາມຊ່ຽວຊານທີ່ຈໍາເປັນມາສູ່ສະພາເມືອງ ເພື່ອຂະຫຍາຍທີ່ຢູ່ອາໄສລາຄາຈັບຕ້ອງໄດ້ທີ່ພວກເຮົາຕ້ອງມີ, ຊຸມຊົນປອດໄພທີ່ພວກເຮົາທຸກຄົນຄວນໄດ້ຮັບ, ການດໍາເນີນການເພື່ອຊ່ວຍຄົນໃນສະພາບວິກິດ ແລະ ການລົງທຶນໃນຊຸມຊົນທີ່ປັບປຸງຄວາມສະເໝີພາບ ແລະ ໂອກາດ.

ຄວາມມຸ່ງໝັ້ນຂອງຂ້າພະເຈົ້າໃນການຮັບໃຊ້ປະຊາຊົນເກີດມາຈາກປະສົບການສ່ວນຕົວທີ່ແບ່ງປັນໂດຍຫຼາກຫຼາຍຄົນໃນເມືອງ Seattle ໃນທຸກມື້ນີ້. ຂ້າພະເຈົ້າເກີດຈາກພໍ່ແມ່ໄວໜຸ່ມທີ່ລໍາບາກ ແລະ ຖືກລ້ຽງມາໂດຍພໍ່ໃຫຍ່ແມ່ໃຫຍ່ຂອງຂ້າພະເຈົ້າ. ຄອບຄົວຂອງຂ້າພະເຈົ້າເຄີຍຮັບມືກັບວົງຈອນທີ່ເຈັບຊໍ້າຂອງການກັກຂັງ, ການໃຊ້ສານເສບຕິດ ແລະ ການບໍ່ມີເຮືອນຢູ່ອາໄສ. ຂ້າພະເຈົ້າຮູ້ສຶກຂອບໃຈທີ່ໄດ້ມີການສະໜັບສະໜຸນໃນຊຸມຊົນຂອງຂ້າພະເຈົ້າທີ່ປູເສັ້ນທາງໄປສູ່ຄວາມສໍາເລັດໃຫ້ຂ້າພະເຈົ້າ - ແລະ ຂ້າພະເຈົ້າຕ້ອງການຮັບປະກັນໃຫ້ຄົນໜຸ່ມທຸກຄົນໃນເມືອງ Seattle ມີໂອກາດແບບດຽວກັນເຫຼົ່ານັ້ນ.

ຂ້າພະເຈົ້າພ້ອມແລ້ວທີ່ຈະນໍາເອົາມຸມມອງ ແລະ ຄວາມຫຼົງໄຫຼທີ່ມີຂໍ້ມູນຄົບຖ້ວນຂອງຂ້າພະເຈົ້າເພື່ອສ້າງປະໂຫຍດໃຫ້ແກ່ສະພາເມືອງ ແລະ ເປັນກະບອກສຽງໃຫ້ແກ່ປະຊາຊົນທຸກຄົນຂອງເມືອງ Seattle. ພວກເຮົາພະເຊີນກັບສິ່ງທ້າທາຍຮີບດ່ວນທີ່ຮຽກຮ້ອງໃຫ້ມີຄວາມຄິດ, ພະລັງງານ ແລະ ການນໍາພາໃໝ່ໆ. ດ້ວຍຄູປອງ ແລະ ຄະແນນສຽງຂອງບັນດາທ່ານ ຂ້າພະເຈົ້າຈະສ້າງຈາກປະສົບການການສະໜັບສະໜຸນ ແລະ ການດໍາເນີນການຂອງຂ້າພະເຈົ້າເພື່ອໃຫ້ເມືອງ Seattle ເປັນທີ່ຈັບຕ້ອງໄດ້, ເປັນທີ່ຕ້ອນຮັບ ແລະ ປູເສັ້ນທາງໄປສູ່ອະນາຄົດທີ່ດີກວ່າ.

ຜູ້ລົງສະໝັກເລືອກຕັ້ງນີ້ກໍາລັງເຂົ້າຮ່ວມໃນໂຄງການຄູປອງບໍລິຈາກສິ່ງເສີມປະຊາທິປະໄຕ *(Democracy Voucher Program).*



**ຊື່ຜູ້ລົງສະໝັກເລືອກຕັ້ງ:** Saunatina Annaca Sanchez

**ຊື່ການໂຄສະນາຫາສຽງ:** Saunatina ສໍາລັບເມືອງ Seattle

**ເວັບໄຊຂອງໂຄສະນາຫາສຽງ:** info@saunatinaforseattle.com

**ຕໍາແໜ່ງໃນເມືອງ:** 8

**ເບີໂທລະສັບການໂຄສະນາຫາສຽງ:** 803-272-8628

ຂ້າພະເຈົ້າໄດ້ຖືກລ້ຽງດູໃນ Holly Park ແລະ Yesler Terrace ໂດຍພໍ່ຂອງຂ້າພະເຈົ້າທີ່ເຮັດວຽກໜັກ, ແມ່ທີ່ພິການຂອງຂ້າພະເຈົ້າ ແລະ ຊຸມຊົນຂອງເພື່ອນບ້ານ ໃນຂະນະທີ່ຂ້າພະເຈົ້າໄດ້ຊ່ວຍລ້ຽງດູນ້ອງໆ ຂອງຂ້າພະເຈົ້າ. ຄວາມຮັກມັກຂອງຂ້າພະເຈົ້າໃນເລື່ອງໂຄງສ້າງລ່າງ ແລະ ການວາງແຜນຕົວເມືອງ ແມ່ນໄດ້ຮັບແຮງກະຕຸ້ນຈາກປະສົບການທີ່ອາໄສຢູ່ໃນເຮືອນສາທາລະນະ ແລະ ການນໍາໃຊ້ລົດໂດຍສານຂອງເຂດປົກຄອງ King.

ຂ້າພະເຈົ້າໄດ້ຖືກຮອງຮັບໂດຍ ສະຫະພັນຜູ້ໂດຍສານ ຊຶ່ງເປັນບ່ອນທີ່ຂ້າພະເຈົ້າໄດ້ຮ່ວມກໍ່ຕັ້ງຄະນະເຮັດວຽກບໍລິການລົດເມ ແລະ ລົດໂດຍສານ. ຂ້າພະເຈົ້າໄດ້ຮ່ວມມືກັບຫຼາກຫຼາຍກຸ່ມ ເພື່ອຂະຫຍາຍໂຄງສ້າງລ່າງສໍາລັບລົດຖີບ ແລະ ລົດໂດຍສານ ຄຽງຄູ່ກັບສະໂມສອນລົດຖີບຄາສເຄດ, ສະໜັບສະໜູນ ສໍານັກງານມາດຕະຖານຜູ້ເຊົ່າ ຜ່ານສະພາບໍລິຫານງານຂອງຜູ້ເຊົ່າໃນເມືອງ Seattle ແລະ ຍຶດໝັ້ນເພື່ອປະຊາທິປະໄຕໃນຄະນະກໍາມະການຂອງ ສະຫະພັນຜູ້ລົງຄະແນນສຽງທີ່ເປັນແມ່ຍິງ–SKC.

ເມື່ອພິຈາລະນາເລື່ອງນິຕິກໍາ, ຂ້າພະເຈົ້າຕັ້ງຄໍາຖາມວ່າ: “ເປົ້າໝາຍແມ່ນຫຍັງ? ຜູ້ໃດໄດ້ຮັບຜົນປະໂຫຍດ? ຜູ້ໃດໄດ້ຮັບຄວາມເສຍຫາຍ?”

ຂ້າພະເຈົ້າສະໜັບສະໜູນ I-137, ປັບປຸງກົດໝາຍການກໍານົດເຂດ ເພື່ອສ້າງເຮືອນອີກຫຼາຍຫຼັງສໍາລັບຄອບຄົວຕ່າງໆ ແລະ ຮ່ວມມືກັບຜູ້ໃຫ້ບໍລິການຈັດສັນເຮືອນ ເພື່ອປະກາດນໍາໃຊ້ຂໍ້ຕົກລົງກ່ຽວກັບສິດໃນທີ່ພັກອາໄສ.

ພວກເຮົາຈະປະສົບກັບບັນຫາການຂາດດຸນ $200 ລ້ານ ຖ້າບໍ່ເສຍສະຫຼະສະຫວັດດີການຂອງປະຊາຊົນເມືອງ Seattle ຜ່ານກະແສລາຍຮັບແບບກ້າວໜ້າ ເຊັ່ນ: Jumpstart ແລະ ສ້າງລາຍຮັບໃໝ່ ເຊັ່ນ: ອາກອນສ່ວນໄດ້ຈາກທຶນ.

ຂ້າພະເຈົ້າຈະໃຫ້ຄວາມສໍາຄັນແກ່ການບໍລິການສາທາລະນະ, ເຊັ່ນ: ຫ້ອງນໍ້າ 24/7/365 ໃນສວນສາທາລະນະ, ເພື່ອວ່າທຸກຄົນຈະສາມາດເຂົ້າເຖິງວັດທະນະທໍາຂອງຕົວເມືອງໄດ້ຢ່າງປອດໄພ.

ເມື່ອໄດ້ເປັນສ່ວນໜຶ່ງຂອງສະພາເມືອງ, ຂ້າພະເຈົ້າຈະນໍາຄວາມຄິດແບບມີການຮ່ວມມື ແລະ ເນັ້ນໜັກທີ່ລາຍລະອຽດ ເພື່ອເຊື່ອມປະສານພະແນກຕ່າງໆ ແລະ ສ້າງໃຫ້ເມືອງ Seattle ເປັນເມືອງທີ່ເທົ່າທຽມກັນສໍາລັບທຸກຄົນ.

*ຜູ້ລົງສະໝັກເລືອກຕັ້ງນີ້ກໍາລັງເຂົ້າຮ່ວມໃນໂຄງການຄູປ໋ອງບໍລິຈາກສົ່ງເສີມປະຊາທິປະໄຕ (Democracy Voucher Program).*



**ຊື່ຜູ້ລົງສະໝັກເລືອກຕັ້ງ**: Tanya Woo

**ຊື່ການໂຄສະນາຫາສຽງ:** ໝູ່ເພື່ອນຂອງ Tanya Woo

**ເວັບໄຊການໂຄສະນາຫາສຽງ:** tanyawooforseattle.com

**ຕຳແໜ່ງໃນເມືອງ:** 8

**ເບີໂທລະສັບການໂຄສະນາຫາສຽງ:** 206-657-6679

ສະບາຍດີ! ຂ້າພະເຈົ້າຊື່ Tanya Woo, ເປັນກຽດທີ່ໄດ້ຮັບໃຊ້ເປັນສະມາຊິກສະພາເມືອງ Seattle ຕາມການແຕ່ງຕັ້ງຂອງທ່ານ.

Seattle ແມ່ນເຮືອນຕະຫຼອດຊີວິດຂອງຂ້າພະເຈົ້າ. ຄອບຄົວຂອງຂ້າພະເຈົ້າອົບພະຍົບມາທີ່ນີ້ໃນປີ 1887 ແລະ ຂ້າພະເຈົ້າຖືກລ້ຽງດູໃນ Beacon Hill. ຕອນນີ້, ຂ້າພະເຈົ້າອາໄສຢູ່ໃນ Rainier Beach, ມີຄວາມກ່ຽວພັນຢ່າງເລິກຊຶ້ງໃນຊຸມຊົນເມືອງຄົນຈີນ/ເຂດຄົນຕ່າງຊາດ. ບໍ່ວ່າຂ້າພະເຈົ້າຕ້ອງໄປເຮັດວຽກຢູ່ໃສກໍຕາມໃນເມືອງ Seattle, ຄວາມຮັກມັກໜຶ່ງດຽວຍັງຄົງເປັນຄືເກົ່າ: ການສົ່ງເສີມສຽງຂອງຜູ້ຄົນທີ່ບອບບາງ.

ເປັນເລື່ອງທີ່ໜ້າເສຍດາຍ ເປັນເວລາຫຼາຍປີ, ຜູ້ນຳຂອງເມືອງ Seattle ໄດ້ປະລະຜູ້ຄົນທີ່ບອບບາງທີ່ສຸດ. ອາຊະຍາກຳໄດ້ສົ່ງຜົນກະທົບຕໍ່ພື້ນທີ່ທີ່ມີລາຍໄດ້ຕ່ຳສຸດຂອງພວກເຮົາຢ່າງບໍ່ສົມສ່ວນ ແລະ ການແຜ່ລະບາດຂອງສານເຟນທານິວຢ່າງບໍ່ມີການກວດສອບ ໄດ້ເອົາຊີວິດຂອງຄົນໄຮ້ບ້ານໃນພື້ນທີ່ຂອງພວກເຮົາ. ໃນຖານະທີ່ເປັນສະມາຊິກສະພາຂອງທ່ານ, ຂ້າພະເຈົ້າຈະໃຫ້ບູລິມະສິດແກ່ການສະໜອງທຶນສຳລັບວິທີແກ້ໄຂບັນຫາທີ່ຜ່ານການພິສູດແລ້ວວ່າເຮັດໄດ້ຈິງ ແລະ ຮັບປະກັນວ່າ ເຈົ້າໜ້າທີ່ຕອບໂຕ້ແຖວທຳອິດຂອງພວກເຮົາ ລວມເຖິງທີມງານດູແລສຸຂະພາບ ແລະ ຝ່າຍບັງຄັບໃຊ້ກົດໝາຍ ມີພະນັກງານຢ່າງຄົບຖ້ວນ.

ບັນຫາຊັບຊ້ອນຮຽກຮ້ອງໃຫ້ມີວິທີການແກ້ໄຂບັນຫາຕົວຈິງ. ນັບຕັ້ງແຕ່ການນຳພາລາດຕະເວນເຝົ້າຊຸມຊົນ ຈົນເຖິງການຈັດຕັ້ງເພື່ອຕໍ່ຕ້ານການເລືອກປະຕິບັດຍ້ອນເຊື້ອຊາດ, ການສ້າງເຮືອນສຳລັບຄົນເຮັດວຽກ ແລະ ແມ່ນແຕ່ການກຳກັບສານນາຄັນທີ່ຈຳໜ່າຍຕາມຖະໜົນ, ຂ້າພະເຈົ້າໄດ້ດຳເນີນການໂດຍກົງ. ທ່ານສົມຄວນໄດ້ຮັບຜູ້ນຳທີ່ມີຄວາມຮັກມັກ, ມີຫຼັກການ ແລະ ເຮັດວຽກໜັກ ຜູ້ຊຶ່ງເຂົ້າໃຈຊຸມຊົນທີ່ບອບບາງທີ່ສຸດຂອງພວກເຮົາ. ທຸກວັນ, ຂ້າພະເຈົ້າພະຍາຍາມນຳເອົາວິທີການແກ້ໄຂບັນຫາຕົວຈິງເຂົ້າສູ່ສະພາເມືອງ ແລະ ປະຕິບັດຄວາມມຸ່ງໝັ້ນນັ້ນຕໍ່ປະຊາຊົນຂອງພວກເຮົາ.

ຂ້າພະເຈົ້າຊື່ Tanya Woo ແລະ ຂ້າພະເຈົ້າຂໍຄະແນນສຽງຂອງທ່ານດ້ວຍຄວາມຖ່ອມຕົວ – ແລະ ຄູປ໋ອງຂອງທ່ານ.

ຜູ້ລົງສະໝັກເລືອກຕັ້ງນີ້ກຳລັງເຂົ້າຮ່ວມໃນໂຄງການຄູປ໋ອງບໍລິຈາກສົ່ງເສີມປະຊາທິປະໄຕ *(Democracy Voucher Program).*



**ຊື່ຜູ້ສະໝັກຮັບເລືອກຕັ້ງ:** Tariq Yusuf

**ຊື່ໂຄສະນາຫາສຽງ:** Tariq ສໍາລັບສະພາ

**ເວັບໄຊໂຄສະນາຫາສຽງ:** tariqforcouncil.org

**ຕໍາແໜ່ງໃນສະພາເທດສະບານເມືອງ:** 8

**ເບີໂທລະສັບໂຄສະນາຫາສຽງ:** 206-395-9356

ເລື່ອງຂອງຂ້າພະເຈົ້າແມ່ນເລື່ອງຂອງເມືອງຊີອາເຕິລ. ພໍ່ຂອງຂ້າພະເຈົ້າເປັນຄົນອິນໂດເນເຊຍ ແລະ ແມ່ເປັນຄົນອາເມຣິກາ; ຂ້າພະເຈົ້າໄດ້ເຫັນການປ່ຽນແປງ ແລະ ການຈະເລີນເຕີບໂຕຂອງພາກພື້ນນີ້ໃນສອງທົດສະວັດທີ່ຜ່ານມາ. ພໍ່ແມ່ຂອງຂ້າພະເຈົ້າເພິ່ງພາອາໄສໂຄງການສັງຄົມສົງເຄາະຂອງເມືອງ ແລະ ຂອງລັດທີ່ສໍາຄັນຢ່າງຫຼວງຫຼາຍເຊັ່ນ: ອົງການທີ່ຢູ່ອາໄສຂອງເມືອງຊີອາເຕິລ (Seattle Housing Authority). ໂຄງການເຫຼົ່ານີ້ໄດ້ຊ່ວຍໃຫ້ພວກເຮົາຫຼຸດພົ້ນຈາກການເປັນຄົນບໍ່ມີທີ່ຢູ່ອາໄສ ແລະ ສ້າງຊີວິດໃຫ້ປະສົບຜົນສໍາເລັດໄດ້. ຂ້າພະເຈົ້າສາມາດຮຽນຈົບສໍາເລັດການສຶກສາທີ່ University of Washington (ມະຫາວິທະຍາໄລວໍຊິງຕັນ), ປະສົບຄວາມສໍາເລັດໃນດ້ານວຽກເຮັດງານທໍາໃນອຸດສາຫະກໍາເຕັກໂນໂລຊີ ແລະ ເລີ່ມສ້າງຄອບຄົວຂອງຕົນເອງໄດ້. ເຖິງແມ່ນວ່າພໍ່ແມ່ຂອງຂ້າພະເຈົ້າຈໍາເປັນຕ້ອງດີ້ນຮົນຕໍ່ສູ້, ແຕ່ພວກເພິ່ນກໍ່ໄດ້ລ້ຽງຂ້າພະເຈົ້າໃຫ້ເຕີບໃຫຍ່ດ້ວຍການເຫັນຄຸນຄ່າຂອງຄວາມເອົາໃຈໃສ່ , ຄວາມເຫັນອົກເຫັນໃຈ ແລະ ຄວາມຍຸຕິທໍາ;
ເຊິ່ງເປັນຄຸນຄ່າທີ່ຂ້າພະເຈົ້າຫວັງວ່າຈະເອົາມາໃຊ້ໃນການປະຕິບັດໜ້າທີ່ໃນສະພາເທດສະບານເມືອງ.

ຄວາມຝັນແບບອາເມຣິກາຂອງຂ້າພະເຈົ້າເປັນຈິງໄດ້; ແຕ່ການເດີນທາງແມ່ນເລີ່ມຈະຍາກຂຶ້ນເລື້ອຍໆສໍາລັບຫຼາຍໆຄອບຄົວໃນທຸກມື້ນີ້.
ການບໍລິການສັງຄົມສົງເຄາະທີ່ເຮັດໃຫ້ເລື່ອງຂອງຂ້າພະເຈົ້າໃຫ້ສໍາເລັດໄດ້ແມ່ນບໍ່ສາມາດເຂົ້າເຖິງໄດ້ອີກຕໍ່ໄປ.
ຂ້າພະເຈົ້າຕ້ອງການປ່ຽນແປງສິ່ງນັ້ນ.

ລັດຖະບານທີ່ປົກຄອງເມືອງມີບົດບາດສໍາຄັນໃນຊີວິດຂອງພວກເຮົາ; ໃນຖານະສະມາຊິກສະພາເທດສະບານເມືອງ ຂ້າພະເຈົ້າວາງແຜນທີ່ຈະໃຫ້ການສະໜັບສະໜູນປະຊາຊົນເຊັ່ນ: ພໍ່ແມ່ຂອງຂ້າພະເຈົ້າ,
ຜູ້ທີ່ປະສົບກັບການຕ້ອງລໍຖ້າເງິນເດືອນທີ່ເຫຼືອຢູ່ອີກພຽງໜຶ່ງເດືອນໃຫ້ພຽງພໍສໍາລັບຊ່ວງເວລານັ້ນ,
ຖ້າບໍ່ດັ່ງນັ້ນຈະກາຍເປັນຄົນບໍ່ມີທີ່ຢູ່ອາໄສ. ຂ້າພະເຈົ້າວາງແຜນທີ່ຈະຕອບແທນເມືອງນີ້ໂດຍການສະໜັບສະໜູນຄວາມເທົ່າທຽມກັນ, ຄວາມຍຸຕິທໍາ ແລະ ຄວາມເຫັນອົກເຫັນໃຈ, ຈະຊ່ວຍເຫຼືອຜູ້ທີ່ອ່ອນແອທີ່ສຸດໃນສັງຄົມ ແລະ ສັນຍາວ່າຈະຊ່ວຍເຫຼືອທຸກຄົນເພື່ອໃຫ້ພວກເຮົາສາມາດສ້າງຊຸມຊົນທີ່ສາມັກຄີກັນໄດ້.

*ຜູ້ສະໝັກຄົນນີ້ກໍາລັງເຂົ້າຮ່ວມໂຄງການບັດກໍານັນສະໜັບສະໜູນປະຊາທິປະໄຕ (Democracy Voucher Program).*